ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1532/ຮສສ
ນະຄອນຫຼວງວຽງຈັນ, ວັນທີ 5 ພຶດສະພາ 2021

## ແຈ້ງການ

ເຖິງ: - ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ ແລະ ນະຄອນຫຼວງວຽງຈັນ.
- ຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານການລະບາດຂອງເຊື້ອພະຍາດ COVID-19 ຢູ່ສະຖານທີ່ເຮັດວຽກ.

- ອີງຕາມ ຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນໃນການສືບຕໍ່ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດໂຄວິດ-19 ສະບັບເລກທີ 87/ຄລສພ, ລົງວັນທີ 25 ເມສາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.

ເພື່ອສືບຕໍ່ຈັດຕັ້ງປະຕິບັດການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ໃນຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການ ໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກແຈ້ງການ:**

1. ໃຫ້ຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການໃນຂອບເຂດທົ່ວປະເທດສືບຕໍ່ເຜີຍແຜ່ ແລະ ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ-19 ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ບັນດາແຈ້ງການ ແລະ ລະບຽບການທີ່ກ່ຽວຂ້ອງທີ່ລັດຖະບານວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ ໂດຍໃຫ້ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດຕໍ່ມາດຕະການປ້ອງກັນ ເຊັ່ນ: ຕ້ອງກວດວັດແທກອຸນຫະພູມພະນັກງານ, ກຳມະກອນ ທຸກຄັ້ງກ່ອນເຂົ້າເຮັດວຽກ; ສະໜອງຜ້າອັດປາກ-ດັງໃຫ້ພະນັກງານໂດຍບໍ່ໄດ້ເສຍຄ່າ; ມີບ່ອນລ້າງມືດ້ວຍນ້ຳສະອາດ, ມີສະບູ ຫຼື ເຈວລ້າງມື ໃຫ້ຖືກຕາມຫຼັກການອະນາໄມ; ຕ້ອງຮັກສາໄລຍະຫ່າງ 1 ແມັດຂຶ້ນໄປຢູ່ໃນສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ບ່ອນພັກເຊົາຂອງພະນັກງານ ພ້ອມທັງໃຫ້ຈັດຕັ້ງການຜັດ ປ່ຽນການມາເຮັດວຽກ ເພື່ອຫຼຸດຜ່ອນຄວາມແອອັດ ແລະ ໃນກໍລະນີມີການຮັບສົ່ງຜູ້ອອກແຮງງານມາເຮັດວຽກແມ່ນໃຫ້ເພີ່ມຖ້ຽວ ຫຼື ຈຳນວນພາຫະນະຂົນສົ່ງໃຫ້ຫຼາຍຂຶ້ນເພື່ອບໍ່ໃຫ້ແອອັດ;

2. ສຳລັບຫົວໜ່ວຍແຮງງານທີ່ຖືກສັ່ງໂຈະການດຳເນີນທຸລະກິດຊົ່ວຄາວຈາກຂະແໜງການທີ່ກ່ຽວຂ້ອງ ແມ່ນໃຫ້ພິຈາລະນາຊ່ວຍເຫຼືອຜູ້ອອກແຮງງານຂອງຕົນຕາມຄວາມສາມາດ ເພື່ອຮັກສາຜູ້ອອກແຮງງານໄວ້ ແລະ ເພື່ອເຮັດໃຫ້ຜູ້ອອກແຮງງານເຫຼົ່ານັ້ນໄດ້ສືບຕໍ່ດຳລົງຊີວິດໄດ້ໂດຍພື້ນຖານ ພ້ອມດຽວກັນນັ້ນ ກໍ່ໃຫ້ເກັບກຳຈຳນວນຜູ້ອອກແຮງງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນຜູ້ທີ່ອາໃສຢູ່ຫໍພັກຂອງບໍລິສັດທີ່ເປັນຄົນທ້ອງຖິ່ນອື່ນ ເປັນຜູ້ທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອສະເພາະ(ຖ້າມີ) ເພື່ອລາຍງານຫາອົງການລັດຄຸ້ມຄອງແຮງງານເຊັ່ນ: ພະແນກແຮງງານ ແລະ ສະຫວັດດີການສັງຄົມຂອງແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອເປັນຂໍ້ມູນໃນການຊອກຫາວິທີການຊ່ວຍເຫຼືອຕາມຄວາມເປັນຈິງຈາກລັດຖະບານ. ສຳລັບຫົວໜ່ວຍແຮງງານໃດທີ່ເຫັນວ່າຕົນເອງມີຄວາມພ້ອມທີ່ຈະກັບມາເປີດກິດຈະການໄດ້ກໍໃຫ້ສະເໜີມາຍັງອົງການຄຸ້ມຄອງແຮງງານ ເພື່ອຈະໄດ້ດຳເນີນການຊ່ວຍອີກທາງໜຶ່ງ;

3. ຜູ້ອອກແຮງງານທີ່ເປັນສະມາຊິກຂອງອົງການປະກັນສັງຄົມແຫ່ງຊາດ ທີ່ໄດ້ຖືກໃຫ້ພັກວຽກ ຫຼື ເຮັດວຽກຢູ່ໃນຫົວໜ່ວຍແຮງງານທີ່ຕ້ອງໄດ້ຢຸດກິດຈະການ ເພື່ອປະຕິບັດຕາມມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ນັບແຕ່ວັນທີ 01 ພຶດສະພາ 2021 ເປັນຕົ້ນໄປ ຈະໄດ້ຮັບເງິນນະໂຍບາຍອຸດໜູນວ່າງງານ ຊຶ່ງຜູ້ທີ່ຈະເກີດສິດການອຸດໜູນດັ່ງກ່າວ ຕ້ອງໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມຢ່າງໜ້ອຍ 6 ເດືອນຂຶ້ນໄປໃນໄລຍະ 12 ເດືອນ ນັບແຕ່ເດືອນ ເມສາ 2021 ຄືນຫລັງ, ໄລຍະໃນການປະຕິບັດອຸດໜູນວ່າງງານນີ້ ແມ່ນຈະອີງໃສ່ໄລຍະທີ່ລັດຖະບານປະກາດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ-19 ເທົ່ານັ້ນ. ສຳລັບເງື່ອນໄຂ ແລະ ວິທີໃນການຈັດຕັ້ງປະຕິບັດ ແມ່ນຈະກຳນົດໃນລະບຽບການສະເພາະຕ່າງຫາກ;

4. ບັນດາຫົວໜ່ວຍແຮງງານທີ່ຍັງເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ຜູ້ອອກແຮງງານ ແມ່ນຍັງຕ້ອງໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມປົກກະຕິ ແລະ ຖ້າມີຄວາມຫຍຸ້ງຍາກດ້ານການເງິນ ແມ່ນສາມາດເລື່ອນມອບເງິນສົມທົບໄດ້ແຕ່ຕ້ອງໄດ້ແຈ້ງເປັນລາຍລັກອັກສອນແກ່ອົງການປະກັນສັງຄົມຮັບຊາບ. ສຳລັບຫົວໜ່ວຍແຮງງານທີ່ໄດ້ຢຸດດຳເນີນກິດຈະການຊົ່ວຄາວ ແລະ ບໍ່ໄດ້ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ແກ່ຜູ້ອອກແຮງງານຂອງຕົນ ແມ່ນສາມາດໂຈະການມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມໄລຍະທີ່ທາງການປະກາດມາດຕະການ ຊຶ່ງໃນໄລຍະການໂຈະມອບເງິນສົມທົບນີ້ ຍັງຈະເກີດສິດການອຸດໜູນປິ່ນປົວສຸຂະພາບ ແລະ ອຸດໜູນໄລຍະສັ້ນຕາມປົກກະຕິ ແຕ່ຈະບໍ່ໄດ້ນັບເຂົ້າເປັນໄລຍະປະກັນຕົນສຳລັບການອຸດໜູນໄລຍະຍາວ;

5. ສຳລັບຜູ້ປະກັນຕົນພາກສະໝັກໃຈ ແມ່ນອະນຸຍາດໃຫ້ໂຈະການມອບເງິນສົມທົບໃນເດືອນ ພຶດສະພາ 2021, ຊຶ່ງໃນໄລຍະການໂຈະມອບເງິນສົມທົບນີ້ ຜູ້ປະກັນຕົນສະໝັກໃຈຍັງເກີດສິດການອຸດໜູນປະກັນສັງຄົມທຸກປະເພດ ແລະ ນັບເຂົ້າເປັນໄລຍະປະກັນຕົນສຳລັບການອຸດໜູນໄລຍະຍາວຕາມປົກກະຕິ;

6. ໃນໄລຍະການແຜ່ລະບາດຂອງພະຍາດ COVID-19 ໃຫ້ຫົວໜ່ວຍແຮງງານສືບຕໍ່ປະຕິບັດຕາມກົດ ໝາຍ, ລະບຽບການດ້ານແຮງງານ ແລະ ສັນຍາແຮງງານທີ່ມີຜົນນຳໃຊ້ຢູ່ ໂດຍບໍ່ໃຫ້ສວຍໃຊ້ຜົນກະທົບດັ່ງກ່າວ ເຮັດສິ່ງທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ ໂດຍສະເພາະບໍ່ໃຫ້ມີການຍົກເລີກສັນຍາແຮງງານກັບຜູ້ອອກແຮງງານທີ່ກຳລັງປະສົບກັບບັນຫາ ໂດຍບໍ່ໄດ້ຮັບການອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍຜ່ານການປຶກສາຫາລືສາມຝ່າຍ. ໃນກໍລະນີຜູ້ອອກແຮງງານຫາກໄດ້ພັກວຽກຍ້ອນເຫດຜົນທີ່ກ່ຽວຂ້ອງກັບພະຍາດ COVID-19 ທີ່ພາກສ່ວນກ່ຽວຂ້ອງຢັ້ງຢືນວ່າບໍ່ແມ່ນຄວາມຜິດຂອງຜູ້ອອກແຮງງານ, ຜູ້ອອກແຮງງານຜູ້ນັ້ນຍັງມີສິດໄດ້ຮັບຄ່າແຮງງານເຕັມຕາມປົກກະຕິ;

7. ໃຫ້ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງກວດກາທຸກຫົວໜ່ວຍແຮງງານ ຖ້າພົບເຫັນວ່າຫົວໜ່ວຍແຮງງານໃດບໍ່ປະຕິບັດ

ມາດຕະການໃນການປ້ອງກັນພະຍາດ COVID-19 ຢ່າງເຂັ້ມງວດໄດ້ ແມ່ນໃຫ້ສະເໜີເຖິງຂະແໜງການທີ່ກ່ຽວຂ້ອງ ເພື່ອສັ່ງໂຈະການດຳເນີນທຸລະກິດດັ່ງກ່າວ ພ້ອມທັງລາຍງານໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມເປັນປົກກະຕິ ພ້ອມດຽວກັນນັ້ນ ແມ່ນໃຫ້ດຳເນີນການ ຮັບ ແລະ ເກັບກຳຈຳນວນຜູ້ອອກແຮງງານທັງໃນ ແລະ ນອກລະບົບທີ່ໄດ້ຮັບຜົນກະທົບຈາກການປະຕິບັດມາດຕະການຂອງລັດຖະບານໃນຄັ້ງນີ້ ເພື່ອດຳເນີນການຊ່ວຍເຫຼືອ ຫຼື ສະເໜີຂໍ້ມູນມາຍັງກະຊວງ ເພື່ອແກ້ໄຂ ຫຼື ໃຫ້ການຊ່ວຍເຫຼືອຕາມຄວາມເໝາະສົມ;

ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຮອງລັດຖະມົນຕີ

ຫົວໜ້າຄະນະສະເພາະກິດ ວຽກງານປ້ອງກັນ,

ຄວບຄຸມ ແລະ ຕອບໂຕ້ພະຍາດອັກເສບປອດ COVID-19

ປະເດີມພອນ ສິນທະນີ

ສາມາດຕິດຕໍ່ພົວພັນໄດ້:

1) ກົມຄຸ້ມຄອງແຮງງານ ໂທ: 021 222781 ;
2) ອົງການປະກັນສັງຄົມແຫ່ງຊາດ ໂທ: 021 241280.